# ປັດໃຈທີ່ມີຄວາມສຳພັນກັບການບໍລິຈາກເລືອດແບບສະມັກໃຈ ບໍ່ຮຽກຮ້ອງສິ່ງຕອບແທນ ຂອງປະຊາຊົນໃນຊຸມຊົນເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ

ທອງພັນ ຈັນທະລັກ [1, 2*], ພອນນະພາ ສຸກາຣາເວດສິລິ [2]

1. ສູນບໍລິຈາກເລືອດແຫ່ງຊາດ, ອົງການກາແດງລາວ, ນະຄອນຫຼວງວຽງຈັນ, ສປປ ລາວ
2. ຄະນະສາທາລະນະສຸກສາດ, ມະຫາວິທະຍາໄລຂອນແກ່ນ, ປະເທດໄທ

ໄດ້ຮັບຕົ້ນສະບັບ ທີ 20 ພຶສະພາ 2012, ໄດ້ຮັບບົດທີ່ກວດແກ້ຄືນ 15 ກໍລະກົດ 2012, ເຫັນດີໃຫ້ຈັດພິມ 15 ຕຸລາ 2012

---

**ເຫດຜົນ ແລະ ຄວາມສຳຄັນ:** ສະພາບຂາດເຂີນເລືອດເພື່ອນຳໃຊ້ພາຍໃນໂຮງໝໍ ຂອງ ສປປ ລາວ ເປັນບັນຫາທີ່ສຳຄັນ ແລະ ທ້າຍທາຍ ມາດົນນານແລ້ວ ແລະ ຍັງບໍ່ສາມາດແກ້ໄຂໄດ້ດີເທົ່າທີ່ຄວນ ເນື່ອງຕົວເລກການສະມັກໃຈບໍລິຈາກເລືອດໂດຍບໍ່ຮຽກຮ້ອງສິ່ງຕອບແທນຂອງປະຊາຊົນຍັງຢູ່ໃນລະດັບຕໍ່າ. ມີຫລາຍປັດໃຈ ທີ່ອາດພົວພັນກັບການບໍ່ສະມັກໃຈບໍລິຈາກເລືອດຂອງຄົນລາວ ເຊິ່ງເຮົາຍັງບໍ່ທັນຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງເທື່ອ.

**ວິທີການຄົ້ນຄວ້າ:** ເປັນການສຶກສາແບບ Retrospective, unmatched case-control study ເຊິ່ງກຸ່ມ Cases ໄດ້ແກ່ຄົນທີ່ເຄີຍບໍລິຈາກເລືອດ ໃນລະຫວ່າງ ວັນທີ 1 ມັງກອນ ຫາ ວັນທີ 31 ທັນວາ 2010 ທີ່ມີລາຍຊື່ໃນບັນທຶກຜູ້ບໍລິຈາກເລືອດຂອງສູນບໍລິຈາກເລືອດແຫ່ງຊາດ ແລະ ກຸ່ມ Controls ແມ່ນກຸ່ມທີ່ບໍ່ເຄີຍບໍລິຈາກເລືອດຈັກເທື່ອ ພາຍໃນເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ. ໄດ້ນຳໃຊ້ທິດສະດີ PRECEDE Framework ເປັນຫລັກການສຶກສາຄົ້ນຄວ້າເພື່ອອອກແບບຟອມສອບຖາມ ແນໃສ່ຫາປັດໃຈທີ່ພົວພັນກັບການບໍລິຈາກເລືອດແບບສະມັກໃຈໂດຍບໍ່ມີສິ່ງຕອບແທນ.

**ຜົນຂອງການຄົ້ນຄວ້າ:** ໄດ້ສຶກສາກຸ່ມຕົວຢ່າງຈຳນວນ 898 ຄົນ (ກຸ່ມ Cases ແລະ Controls ກຸ່ມລະ 449 ຄົນ ເທົ່າກັນ). ອາຍຸສະເລ່ຍຂອງຜູ້ເຂົ້າຮ່ວມການສຶກສາທັງໝົດ ແມ່ນມີຄ່າ Median = 26 ປີ (ຕ່ຳສຸດ 17 ປີ ແລະ ສູງສຸດ 40 ປີ). ປັດໃຈທີ່ພົວພັນກັບການບໍລິຈາກເລືອດແບບສະມັກໃຈ ຢ່າງມີຄວາມສຳຄັນທາງສະຖິຕິໄດ້ແກ່ ເພດຊາຍ (OR = 1.71; 95% CI = 1.31-1.23, *P*= 0.001), ສະຖານະເປັນໂສດ (OR = 2.01; 95% CI = 1.52-2.65, P<0.001), ທັດສະນະຄະນະຕິໃນທາງບວກຕໍ່ການບໍລິຈາກເລືອດ (OR = 3.17; 95% CI = 2.37-4.22, *P*<0.001), ສະດວກໃນການເດີນທາງໄປບໍລິຈາກເລືອດ ແລະ ໄລຍະທາງຈາກເຮືອນໄປຫາບ່ອນບໍລິຈາກເລືອດໃກ້ (OR = 2.35; 95% CI = 1.73-3.20, *P*=0.01), (OR = 1.67; 95% CI = 1.25-2.22, *P*=0.001) ຕາມລຳດັບ, ແລະ ການໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການບໍລິຈາກເລືອດໃນທຸກຊ່ອງທາງ (OR = 1.88; 95%CI = 1.38-2.55, *P*<0.001). ປັດໃຈເອື້ອທີ່ສຳຄັນ ແລະ ໜ້າສົນໃຈສຳລັບການສະມັກໃຈບໍລິຈາກເລືອດແບບບໍ່ຮຽກຮ້ອງສິ່ງຕອບແທນ ໄດ້ແກ່ ການບໍລິຈາກເລືອດ ເນື່ອງໃນໂອກາດວັນສຳຄັນຕ່າງໆ ເຊັ່ນ ຄົບຮອບວັນເກີດ, ຄົບຮອດວັນແຕ່ງງານ ແລະ ວັນແຫ່ງຄວາມຮັກ ເປັນຕົ້ນ ເຖິງວ່າປັດໃຈດັ່ງກ່າວຈະບໍ່ມີຄວາມສຳພັນກັບການບໍລິຈາກເລືອດແບບສະມັກໃຈ ໂດຍບໍ່ຮຽກຮ້ອງສິ່ງຕອບແທນ ທາງດ້ານສະຖິຕິກໍ່ຕາມ.

**ສະຫລຸບ:** ອີງໃສ່ຜົນການສຶກສາຄັ້ງນີ້ຊີ້ໃຫ້ເຫັນວ່າ (1) ການໂຄສະນາປຸກລະດົມການບໍລິຈາກເລືອດ ຄວນເນັ້ນໜັກໃສ່ກຸ່ມໄວໜຸ່ມຕາມສະຖາບັນການສຶກສາແຫ່ງຕ່າງໆ, (2) ການຈັດໃຫ້ມີທີມງານເຄື່ອນທີ່ໄປຮັບບໍລິຈາກເລືອດຕາມສະຖານທີ່ຕ່າງໆ ແມ່ນມີຄວາມຈຳເປັນ-ສຳຄັນທີ່ສຸດ ເຊິ່ງຄວນສືບຕໍ່ຢ່າງຕັ້ງໜ້າ ແລະ (3) ຄວນມີການໂຄສະນາປຸກລະດົມການບໍລິຈາກເລືອດແບບສະມັກໃຈຢ່າງຕໍ່ເນື່ອງ ແລະ ຢ່າງກວ້າງຂວາງຕື່ມອີກ ແນໃສ່ເພື່ອຮັບປະກັນຄວາມພຽງພໍຂອງປະລິມານເລືອດທີ່ໃຊ້ພາຍໃນໂຮງໝໍ.

---

* ຕິດຕໍ່ຜູ້ຂຽນ: ທອງພັນ ຈັນທະລັກ, ໂທລະສັບ: 020-22552828, ແຟັກ: 021-218923, ອີເມລ: tchanthalak@yahoo.com

## ພາກສະເໜີ

ອົງການກາແດງສາກົນ (International Federation of Red Cross and Crescent Societies; IFRC) ສ້າງຕັ້ງຂື້ນເມື່ອປີ ຄ.ສ 1919 ທີ່ນະຄອນປາລີ, ປະເທດຝຣັ່ງ ປະກອບດ້ວຍສະມາຊິກເຖິງ 186 ກາແດງລະດັບຊາດ ທີ່ໄດ້ຮັບການຍອມຮັບໃນລະດັບສາກົນ. ວິໄສທັດຂອງອົງການກາແດງສາກົນ IFRC ຄື ການປັບປຸງສຸຂະພາບຂອງປະຊາຊົນ ໃນປະເທດທີ່ໄດ້ຮັບຄວາມເດືອດຮ້ອນ, ເພື່ອເສີມສ້າງແຮງບັນດານໃຈ, ກະຕຸ້ນ, ໃຫ້ອຳນວຍຄວາມສະດວກ ແລະ ສົ່ງເສີມກິດຈະກຳທາງດ້ານມະນຸດສະທຳ ໂດຍມີພາລະກິດໃນການປ້ອງກັນ ແລະ ບັນເທົາຄວາມທຸກທໍລະມານຂອງມະນຸດ. ເປັນອົງກອນດ້ານມະນຸດສະທຳທີ່ໃຫຍ່ທີ່ສຸດໃນໂລກໃນການໃຫ້ຄວາມຊ່ວຍເຫລືອໂດຍບໍ່ເລືອກປະຕິບັດ ໃນເລື່ອງສັນຊາດ, ເຊື້ອຊາດ, ຄວາມເຊື່ອທາງສາດສະໜາ, ທຸກຊັ້ນຄົນ ແລະ ຄວາມຄິດທາງການເມືອງ (ອ້າງໃນ International Federation of Red Cross and Red Crescent Societies, 2011).

ອົງການກາແດງລາວ (Lao Red Cross; LRC) ສ້າງຕັ້ງຂື້ນເມື່ອປີ ຄ.ສ 1955 ແລະ ໄດ້ເຂົ້າເປັນສະມາຊິກຂອງອົງການກາແດງສາກົນ IFRC ເມື່ອວັນທີ່ 25 ຕຸລາ 1957 ໃນລະຫວ່າງກອງປະຊຸມລະດັບຊາດຄັ້ງທີ່ 24 ທີນິວເດລີ ປະເທດອິນເດຍ. ພາລະກິດຫລັກຂອງອົງການກາແດງລາວແມ່ນ ໃຫ້ຄວາມຊ່ວຍເຫລືອດ້ານມະນຸດສະທຳແກ່ປະຊາຊົນໃນປະເທດ ເຊັ່ນດຽວກັນກັບອົງການກາແດງສາກົນ ແລະ ອົງການກາແດງອື່ນໆ ທົ່ວໂລກ (ອ້າງໃນ Lao Red Cross, 2011). ພາລະກິດ ແລະ ສິ່ງທີ່ທ້າທາຍ ຂອງອົງການກາແດງລາວໃນປັດຈຸບັນ ຄື ການຈ່າຍເລືອດໃຫ້ແກ່ຄົນເຈັບນັບມື້ນັບເພີ່ມຂື້ນ. ໜ່ວຍງານຂອງສູນບໍລິຈາກເລືອດ ມີໜ້າທີ່ປຸກລະດົມຂົນຂວາຍຈັດຫາຜູ້ບໍລິຈາກເລືອດດ້ວຍຄວາມສະໝັກໃຈບໍ່ຮຽກຮ້ອງສິ່ງຕອບແທນ ໃຫ້ສອດຄ່ອງກັບວຽກງານຂອງອົງການກາແດງສາກົນ ໂດຍມີວັດຖຸປະສົງເພື່ອໃຫ້ໄດ້ເລືອດບໍລິຈາກທີ່ພຽງພໍ ແລະ ປອດໄພຕໍ່ຄົນເຈັບທີ່ຮັບເລືອດ ແລະ ເພີ່ມປະລິມານເລືອດໃຫ້ຫລາຍຂື້ນໃນທາງການແພດພາຍໃນປະເທດ (ອ້າງໃນ National Blood Transfusion Centre, 2010).

ພາວະການຂາດແຄນເລືອດໃຊ້ພາຍໃນປະເທດ ເກີດຂື້ນໃນຫລາຍໆປະເທດທົ່ວໂລກ ເຊັ່ນ ກຳປູເຈຍ, ຈີນ, ມາເລເຊຍ, ນິງໂກເລຍ, ປາປົວນິວກີນີ, ຟີລິບປິນ, ຫວຽດນາມ ແລະ ສປປ ລາວ (ອ້າງໃນ World Health Organization [WHO], 2002). ແຕ່ສະພາບ, ບັນຫາ, ແລະ ປັດໄຈ ທີ່ເຮັດໃຫ້ເກີດບັນຫາຂາດແຄນເລືອດໃນແຕ່ລະປະເທດ ອາດແຕກຕ່າງກັນໄປ. ການຂາດແຄນເລືອດໃນ ສປປ ລາວ ເກີດຂື້ນເນື່ອງຈາກ ປະລິມານຜູ້ບໍລິຈາກເລືອດພາຍໃນປະເທດມີໜ້ອຍ. ຈາກສະຖິຕິຍ້ອນຫລັງປະມານ 4 ປີ ມີຜູ້ບໍລິຈາກເລືອດພຽງ 0.4% ຂອງປະຊາກອນພາຍໃນປະເທດທັງໝົດ (ອ້າງໃນ National Blood Transfusion Centre, 2010). ປະຈຸບັນ ເຮົາຍັງບໍ່ທັນຮູ້ຈັກ ແລະ ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບປັດໄຈທີ່ພົວພັນກັບ ບັນຫາການບໍລິຈາກເລືອດໃນປະລິມານທີ່ຕ່ຳຂອງປະຊາກອນລາວເທື່ອ. ດັ່ງນັ້ນ ການສຶກສາຄັ້ງນີ້ ຈຶ່ງມີຈຸດປະສົງ ເພື່ອຊອກຫາປັດໄຈ ທີ່ມີຄວາມສຳພັນຕໍ່ການບໍລິຈາກເລືອດດ້ວຍຄວາມສະໝັກໃຈບໍ່ຮຽກຮ້ອງສິ່ງຕອບແທນຂອງປະຊາຊົນໃນຊຸມຊົນ ເມືອງ ຈັນທະບູລີ ນະຄອນຫລວງ ວຽງຈັນ ເຊິ່ງຂໍ້ມູນທີ່ໄດ້ມາ ອາດຊ່ວຍໃຫ້ພາກສ່ວນທີ່ກ່ຽວຂ້ອງ ນຳໄປວາງແຜນໂຄສະນາປຸກລະດົມ ເພື່ອເຮັດໃຫ້ການບໍລິຈາກເລືອດດ້ວຍຄວາມສະມັກໃຈ - ບໍ່ຮຽກຮ້ອງສິ່ງຕອບແທນຂອງປະຊາຊົນ ຫລາຍຂື້ນກວ່າເກົ່າ.

## ວິທີການຄົ້ນຄວ້າ

### *ຂອບເຂດການຄົ້ນຄວ້າ*

ການຄົ້ນຄ້ວາໃນຄັ້ງນີ້ ເປັນການຄົ້ນຄ້ວາແບບວິເຄາະ ໂດຍມີກຸ່ມ Case ແລະ ກຸ່ມປຽບທຽບ (Analytical study, case-control study) ໂດຍຄົ້ນຄ້ວາຂໍ້ມູນຜູ້ບໍລິຈາກເລືອດແບບສະໝັກໃຈບໍ່ຮຽກຮ້ອງສິ່ງຕອບແທນ ໃນກຸ່ມທີ່ມີອາຍຸ 17 - 40 ປີ ຂອງປະຊາຊົນໃນຊຸມຊົນ ເມືອງ ຈັນທະບູລີ ນະຄອນຫລວງວຽງຈັນ.

### *ກຸ່ມຕົວຢ່າງ*

ກຸ່ມທີ 1 (Cases) ແມ່ນກຸ່ມຜູ້ບໍລິຈາກເລືອດແບບສະໝັກໃຈບໍ່ຮຽກຮ້ອງສິ່ງຕອບແທນ ເປັນຜູ້ທີ່ມີອາຍຸ 17-40 ປີ ມີລາຍຊື່ຢູ່ໃນທະບຽນຂອງສູນບໍລິຈາກເລືອດແຫ່ງຊາດ ໂດຍມີປະຫວັດໃນການບໍລິຈາກເລືອດນັບແຕ່ 1 ຄັ້ງຂື້ນໄປ ໃນຊ່ວງເວລານັບແຕ່ວັນທີ 1 ມັງກອນ ປີ 2010 ເຖິງວັນທີ 31 ທັນວາ 2010.

ກຸ່ມທີ 2 (Controls) ແມ່ນກຸ່ມບໍ່ເຄີຍບໍລິຈາກເລືອດ ທີ່ມີອາຍຸລະຫວ່າງ 17-40 ປີ ແລະ ອາໄສຢູ່ໃນເມືອງຈັນທະບູລີ ນະຄອນຫລວງວຽງຈັນ ນັບແຕ່ປີ 2010 ເປັນຕົ້ນມາ.

### *ການຄິດໄລ່ຂະໜາດຕົວຢ່າງ*

ຄິດໄລ່ຂະໜາດຕົວຢ່າງໂດຍໃຊ້ສູດຂອງ (Hsieh, Bloch & Larson 1998) ຂ້າງລຸ່ມນີ້.

$$n = \frac{\left( Z_{1-\alpha/2}\sqrt{\frac{p(1-p)}{B}} + Z_{1-\beta}\sqrt{p_0(1-p_0) + \frac{p_1(1-p_1)(1-B)}{B}} \right)^2}{\left[ (p_0 - p_1)(1-B) \right]}$$

$$n = \frac{\left( 1.96\sqrt{\frac{0.128(1-0.128)}{0.822}} + 0.842\sqrt{0.062(1-0.062) + \frac{0.142(1-0.142)(1-0.822)}{0.822}} \right)^2}{\left[ (0.062 - 0.142)^2(1-0.822) \right]}$$

ເມື່ອແທນຄ່າລົງໃນສູດ ຈຶ່ງໄດ້ຂະໜາດຕົວຢ່າງ 808 ຄົນ. ຈາກການຄິດໄລ່ຂະຫນາດຕົວຢ່າງ ໂດຍພິຈາລະນາຈາກຕົວແປ ອິດສະຫລະຕົວຜັນແປດ່ຽວ (Uni-variable) ໄດ້ຂະຫນາດຕົວຢ່າງປະມານ 808 ຄົນ, ແຕ່ໃນກໍລະນີນີ້ ຜູ້ຄົ້ນຄ້ວາມີຕົວແປອິດສະຫລະຫລາຍກວ່າໜຶ່ງຕົວ ດັ່ງນັ້ນປັບຂະໜາດຕົວຢ່າງ ໂດຍໃຊ້ສູດຄຳນວນຂະໜາດຕົວຢ່າງ (Hsieh, Bloch & Larson 1998) ຂ້າງລຸ່ມນີ້.

$$n_p = \frac{n_1}{(1 - r^2_{1.23..p})}$$

ຈາກການແທນຄ່າ ແມ່ນຂະໜາດຕົວຢ່າງ (n) = 898 ຄົນ.

### *ວິທີການສຸ່ມຕົວຢ່າງ*

ການສຸ່ມຕົວຢ່າງໃນກຸ່ມຜູ້ບໍລິຈາກເລືອດດ້ວຍຄວາມສະຫມັກໃຈ ໃຊ້ວິທີການສຸ່ມແບບງ່າຍດາຍ (Simple radom sampling) ໂດຍຄັດແຍກຂໍ້ມູນຈາກທະບຽນຈາກຜູ້ບໍລິຈາກເລືອດຂອງສູນບໍລິຈາກເລືອດແຫ່ງຊາດ ທີ່ອາໄສຢູ່ເມືອງຈັນທະບູລີ ນະຄອນຫລວງວຽງຈັນ.

1. Cases ຄື: ກຸ່ມຜູ້ບໍລິຈາກເລືອດທີ່ມີອາຍຸ 17-40 ປີ ຂອງເມືອງຈັນທະບູລີ ທີ່ມີຊື່ຢູ່ໃນທະບຽນຂອງສູນບໍລິຈາກເລືອດ ໃຊ້ວິທີການສຸ່ມແບບງ່າຍດາຍໜຶ່ງຄັ້ງ ໃນການສຸ່ມຈາກເລກລຳດັບທະບຽນຂອງສູນບໍລິຈາກເລືອດ.

2. Controls ຄື: ກຸ່ມທີ່ບໍ່ເຄີຍບໍລິຈາກເລືອດ ໃຊ້ວິທີການສຸ່ມແບບງ່າຍດາຍສອງຄັ້ງ: ໃນຄັ້ງທຳອິດສຸ່ມເລືອກຈາກເຮືອນເລກທີ່ຂອງປະຊາຊົນໃນ 31 ບ້ານໃນເມືອງຈັນທະບູລີ ນະຄອນຫລວງວຽງຈັນ, ບ້ານລະ 20 ຫລັງຄາເຮືອນ; ຂັ້ນຕອນທີ່ສອງ ສຸ່ມເລືອກບຸກຄົນເປົ້າຫມາຍທີ່ມີອາຍຸ 17-40 ປີ ຈາກຫລັງຄາເຮືອນດັ່ງກ່າວ. ກໍລະນີກຸ່ມເປົ້າຫມາຍຫລາຍກ່ວາ 1 ຄົນ ແມ່ນໄດ້ຄັດເລືອກບຸກຄົນເປົ້າຫມາຍຫລັງຄາເຮືອນລະ 1 ຄົນ ຈົນຄົບຕາມຈຳນວນເປົ້າຫມາຍ.

### *ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາ*

ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາ ແມ່ນແບບສອບຖາມ ທີ່ຜູ້ຄົ້ນຄ້ວາໄດ້ສ້າງ ແລະ ພັດທະນາຂຶ້ນ ໂດຍແບ່ງອອກເປັນ 2 ພາກຄື: ພາກທີ 1 ແມ່ນຂໍ້ມູນຄຸນລັກສະນະສ່ວນບຸກຄົນ, ພາກທີ 2 ແມ່ນແບບສອບຖາມຄວາມຕັ້ງໃຈ ແລະ ສິ່ງເສີມຕໍ່ການບໍລິຈາກເລືອດ. ໄດ້ຮັບການກວດສອບທາງດ້ານຄຸນນະພາບເຄື່ອງມືຈາກຜູ້ຊ່ຽວຊານ 3 ທ່ານ.

### *ການວິເຄາະຂໍ້ມູນ* (Data analysis)

1. ສະຖິຕິແບບພັນລະນາ (Descriptive statistics) ເຊັ່ນ: ການແຈກຢາຍຄວາມຖີ່ (Frequency), ເປີເຊັນ (Percentage), ຄ່າສະເລ່ຍ (Mean), ຄ່າບ່ຽງເບນມາດຕະຖານ (Standard deviation), ຄ່າກາງ (Median), ຄ່າຕ່ຳສຸດ (Minimum), ຄ່າສູງສຸດ (Maximum).

2. ສະຖິຕິອ້າງອີງ (Inferential statistics): ໃຊ້ວິເຄາະຄວາມສຳພັນລະຫວ່າງຕົວແປຕົ້ນຕ່າງໆ ກັບການບໍລິຈາກເລືອດຂອງປະຊາຊົນເທື່ອລະຕົວຜັນແປ ໂດຍໃຊ້ສະຖິຕິທົດສອບ (Chisquare test) ແລະ ນຳມາສະເໜີຂະຫນາດຄວາມສຳພັນໂດຍໃຊ້ Crude odds ratio ພ້ອມຊ່ວງເຊື່ອໝັ້ນ ທີ່ລະດັບ 95% CI ຂອງ OR (95% Confidence interval of Odds ratio).

3. ການວິເຄາະຄວາມສຳພັນໂດຍໃຊ້ຕົວຜັນແປດ່ຽວ(Univariate analysis): ເປັນການວິເຄາະຄວາມສຳພັນລະຫວ່າງຕົວຜັນແປຕາມ ກັບຕົວຜັນແປຕົ້ນຕົວດຽວ ໂດຍບໍ່ໄດ້ຄຳນຶງເຖິງ ຜົນກະທົບຂອງຕົວແປອື່ນ, ຜົນທີ່ໄດ້ຄືຄ່າ Odds ratio (OR) ແລະ ຄ່າ p-value ທີ່ນຳມາໃຊ້ໃນການຄັດກອງຕົວຜັນແປໃນໂມເດວ ໂດຍຍັງຮັກສາຕົວແປຕົ້ນທີ່ມີຄວາມສຳພັນກັບຕົວແປຕາມທີ່ p-value <0.25.

## ຜົນການຄົ້ນຄ້ວາ

ໃນຈຳນວນກຸ່ມຕົວຢ່າງ 898 ຄົນ ແບ່ງເປັນ 2 ກຸ່ມ ຄືກຸ່ມເຄີຍບໍລິຈາກເລືອດ ແລະ ບໍ່ເຄີຍບໍລິຈາກເລືອດ ກຸ່ມລະ 449 ຄົນ ເທົ່າກັນ.

### *ປັດໄຈລັກສະນະສ່ວນບຸກຄົນ*

ອາຍຸສະເລ່ຍຂອງຜູ້ເຂົ້າຮ່ວມການສຶກສາທັງໝົດ ແມ່ນມີຄ່າ Median = 26 ປີ (ຕ່ຳສຸດ 17 ປີ ແລະ ສູງສຸດ 17 ປີ). ກຸ່ມອາຍຸ 20-29 ປີ ແມ່ນມີ 37% ໃນກຸ່ມເຄີຍບໍລິຈາກເລືອດ ແລະ 39.4% ໃນກຸ່ມບໍ່ເຄີຍບໍລິຈາກເລືອດ. ສັດສ່ວນເປີເຊັນເພດຊາຍໃນກຸ່ມບໍລິຈາກເລືອດ (57.2%) ແມ່ນສູງກວ່າໃນກຸ່ມບໍ່ເຄີຍບໍລິຈາກເລືອດ (43.9%), (p-value = 0.001), (OR = 1.71; 95% CI = 1.31-1.23). ຜູ້ເຂົ້າຮ່ວມການສຶກສາສ່ວນໃຫ່ຍ ມີລະດັບການສຶກສາຊັ້ນມັດທະຍົມປາຍ: 60.1% (ໃນກຸ່ມບໍລິຈາກເລືອດ) ແລະ 63.7% ໃນກຸ່ມບໍ່ເຄີຍບໍລິຈາກເລືອດ, (p-value <0.001), (OR = 2.87; 95% CI = 0.77-10.73). ສ່ວນໃຫ່ຍຂອງຜູ້ບໍລິຈາກເລືອດ ແມ່ນມີຖານະເປັນໂສດ (72.2%) ຫລາຍກວ່າຜູ້ບໍ່ໄດ້ບໍລິຈາກເລືອດ (56.4%) (p-value <0.001), (OR = 2.01; 95% CI = 1.52-2.65).

### *ປັດໄຈນຳ*

ທັງກຸ່ມທີ່ເຄີຍບໍລິຈາກເລືອດ ແລະ ກຸ່ມທີ່ບໍ່ເຄີຍບໍລິຈາກເລືອດ ແມ່ນມີຄວາມຮູ້ກ່ຽວກັບການບໍລິຈາກເລືອດໃນລະດັບຕ່ຳ. ເປີເຊັນຂອງຜູ້ທີ່ມີຄວາມຮູ້ ກ່ຽວກັບການບໍລິຈາກເລືອດໃນລະດັບຕ່ຳໃນກຸ່ມທີ່ເຄີຍບໍລິຈາກເລືອດແມ່ນ 56.4% ແລະ ໃນກຸ່ມບໍ່ເຄີຍບໍລິຈາກເລືອດແມ່ນ 79.5%, (p-value <0.001), (OR = 3.01; 95%CI = 2.24 - 4.04). ຜູ້ທີ່ເຄີຍບໍລິຈາກເລືອດ ມີທັດສະນະຄະຕິບວກຕໍ່ການບໍລິຈາກເລືອດສູງກວ່າ (77.5%) ເມື່ອທຽບກັບກຸ່ມທີ່ບໍ່ເຄີຍບໍລິຈາກເລືອດ (52.1%) (p-value <0.001), (OR = 3.17; 95% CI = 2.37-4.22).

### *ປັດໄຈເອື້ອ*

ຜູ້ທີ່ເຄີຍບໍລິຈາກເລືອດ ມີຄວາມສະດວກໃນການເດີນທາງເພື່ອໄປບໍລິຈາກເລືອດ 81.3% ເຊິ່ງສູງກວ່າກຸ່ມບໍ່ເຄີຍບໍລິຈາກເລືອດ 64.8% (p-value < 0.001), (OR = 2.35; 95% CI = 1.73-3.20), ສ່ວນໄລຍະເວລາເດີນທາງ ຈາກເຮືອນໄປຫາບ່ອນບໍລິຈາກເລືອດ ທີ່ຕ່ຳກວ່າ 30 ນາທີ ໃນກຸ່ມເຄີຍບໍລິຈາກເລືອດແມ່ນປະມານ 74.4% ແລະ ໃນກຸ່ມ ບໍ່ເຄີຍບໍລິຈາກເລືອດແມ່ນ 63.5% (p-value <0.001), (OR = 1.67; 95% CI = 1.25-2.22).

### *ປັດໄຈເສີມ*

ພົບວ່າ ກຸ່ມຜູ້ທີ່ເຄີຍບໍລິຈາກເລືອດ ແມ່ນໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການບໍລິຈາກເລືອດ ຫລາຍກວ່າກຸ່ມບໍ່ເຄີຍບໍລິຈາກເລືອດ ໃນທຸກໆຊ່ອງທາງ ເຊັ່ນ: ເປີເຊັນການໄດ້ຮັບຂໍ້ມູນຂ່າວສານຈາກການເບິ່ງໂທລະພາບ ແລະ ຟັງວິທະຍຸ ໃນກຸ່ມເຄີຍບໍລິຈາກເລືອດ ແມ່ນ 80.4% ແລະ ໃນກຸ່ມບໍ່ເຄີຍບໍລິຈາກເລືອດແມ່ນ 68.6% (p-value < 0.001), (OR = 1.88; 95%CI = 1.38-2.55), ຂໍ້ມູນຂ່າວສານຈາກຫນັງສືພິມ, ເອກະສານ, ແຜ່ນພັບ, ໂປດສເຕີ ແລະ ວາລະສານຕ່າງໆ ໃນກຸ່ມເຄີຍບໍລິຈາກເລືອດແມ່ນ 72.8% ແລະ ໃນກຸ່ມບໍ່ເຄີຍບໍລິຈາກເລືອດແມ່ນ 62.8% (p-value = 0.01), (OR = 1.59; 95% CI = 1.20-2.10).

ປັດໄຈເອື້ອທີ່ສຳຄັນ ແລະ ໜ້າສົນໃຈ ສຳລັບການສະມັກໃຈບໍລິຈາກເລືອດແບບບໍ່ຮຽກຮ້ອງສິ່ງຕອບແທນ ໃນຄັ້ງນີ້ ໄດ້ແກ່ການບໍລິຈາກເລືອດ ເນື່ອງໃນໂອກາດວັນສຳຄັນຕ່າງໆ ເຊັ່ນຄົບຮອບວັນເກີດ, ຄົບຮອດວັນແຕ່ງງານ ແລະ ວັນແຫ່ງຄວາມຮັກ ເປັນຕົ້ນ ເຖິງວ່າປັດໄຈດັ່ງກ່າວຈະບໍ່ມີຄວາມສຳພັນກັບການບໍລິຈາກເລືອດແບບສະມັກໃຈ ໂດຍບໍ່ຮຽກຮ້ອງສິ່ງຕອບແທນທາງດ້ານສະຖິຕິກໍ່ຕາມ.

## ພາກສົນທະນາ

ການຂາດເຂີນເລືອດ ຢູ່ຕາມໂຮງໝໍແຫ່ງຕ່າງໆ ພາຍໃນ ສປປ ລາວ ຍັງເປັນບັນຫາທີ່ທ້າທາຍສຳລັບການປິ່ນປົວ ຮັກສາຊີວິດຄົນເຈັບ ເນື່ອງຈາກຜູ້ສະມັກໃຈບໍລິຈາກເລືອດໂດຍບໍ່ຮຽກຮ້ອງສິ່ງຕອບແທນຍັງມີໜ້ອຍ. ມີຫລາຍປັດໄຈທີ່ອາດກ່ຽວພັນກັບການບໍ່ສະມັກໃຈບໍລິຈາກເລືອດຂອງປະຊາຊົນລາວທົ່ວໄປ ນັບຕັ້ງແຕ່ປັດໄຈສ່ວນບຸກຄົນ ຈົນເຖິງປັດໄຈທາງສັງຄົມ ແລະ ຮີດຄອງປະເພນີວັດທະນາທຳຕ່າງໆ. ແຕ່ວ່າ ການສຶກສາຄົ້ນຄວ້າຫາປັດໄຈທີ່ພົວພັນກັບການບໍ່ສະມັກໃຈບໍລິຈາກເລືອດ ແມ່ນເປັນໄປໄດ້ຂ້ອນຂ້າງຍາກ ເພາະເປັນປະເດັນທີ່ລະອຽດອ່ອນ, ດັ່ງນັ້ນ ການສຶກສາຄັ້ງນີ້ ຈຶ່ງພະຍາຍາມສຶກສາຄົ້ນຄວ້າຫາປັດໄຈທີ່ພົວພັນກັບການສະມັກໃຈບໍລິຈາກເລືອດແບບບໍ່ຮຽກຮ້ອງສິ່ງຕອບແທນ ໃນປະຊາຊົນທົ່ວໄປ ພາຍໃນ 1 ເມືອງ ຂອງນະຄອນຫລວງວຽງຈັນ.

ຈາກການສຶກສາຄົ້ນຄ້ວາໃນຄັ້ງນີ້ພົບວ່າ ອາຍຸທີ່ໜຸ່ມ ແລະ ເພດຊາຍ ເປັນປັດໄຈສ່ວນບຸກຄົນທີ່ສຳຄັນ ແລະ ມີສ່ວນພົວພັນກັບການບໍລິຈາກເລືອດແບບສະມັກໃຈ, ສະນັ້ນ ຈຶ່ງເປັນກຸ່ມຄົນເປົ້າໝາຍ ທີ່ພາກສ່ວນທີ່ກ່ຽວຂ້ອງຄວນເລັ່ງໃສ່ປຸກລະດົມໃຫ້ເຂົາເຈົ້າໄປບໍລິຈາກເລືອດຫລາຍຂຶ້ນກວ່າເກົ່າ. ໃນຄວາມເປັນຈິງແລ້ວ ທາງອົງການກາແດງລາວ ກໍ່ໄດ້ມີເປົ້າໝາຍລະດົມໃຫ້ນັກຮຽນ-ນັກສຶກສາ ໃຫ້ບໍລິຈາກເລືອດ ຢ່າງເປັນປະຈຳຢູ່ແລ້ວ ໂດຍໄດ້ຈັດຕັ້ງໜ່ວຍງານເຄື່ອນທີ່ໄປຕາມໂຮງຮຽນ ແລະ ສະຖາບັນ

ການສຶກສາຕ່າງໆໃນຂອບເຂດທົ່ວປະເທດ ເພື່ອຂໍບໍລິຈາກເລືອດຈາກກຸ່ມຄົນດັ່ງກ່າວ ແລະ ກໍ່ປະສົບຜົນສໍາເລັດຫລາຍພໍສົມຄວນ. ການຈັດຕັ້ງໜ່ວຍງານເຄື່ອນທີ່ໄປຕາມສະຖານທີ່ຕ່າງໆເພື່ອຂໍບໍລິຈາກເລືອດ ແມ່ນມີຄວາມຈໍາເປັນ ແລະ ສໍາຄັນທີ່ສຸດສໍາລັບການຮັບປະກັນໃຫ້ໄດ້ປະລິມານເລືອດຢ່າງພຽງພໍກັບຄວາມຕ້ອງການຂອງຄົນເຈັບ ເຊິ່ງມັນສອດຄ່ອງກັບຜົນການສຶກສາໃນຄັ້ງນີ້ທີ່ພົບວ່າ ຄວາມສະດວກໃນການເດີນທາງໄປບໍລິຈາກເລືອດ ເປັນປັດໄຈທີ່ພົວພັນກັບການສະມັກໃຈບໍລິຈາກເລືອດແບບບໍ່ຮຽກຮ້ອງສິ່ງຕອບແທນ ຢ່າງມີຄວາມສໍາຄັນທາງສະຖິຕິ ແລະ ໄລຍະທາງທີ່ໃກ້ຈາກເຮືອນໄປ ຫາບ່ອນບໍລິຈາກເລືອດ ກໍ່ເປັນປັດໄຈທີ່ພົວພັນກັບການສະມັກໃຈບໍລິຈາກເລືອດໂດຍບໍ່ຮຽກຮ້ອງສິ່ງຕອບແທນ ຢ່າງມີຄວາມສໍາຄັນທາງສະຖິຕິ. ສະນັ້ນ ການຈັດຕັ້ງໜ່ວຍງານເຄື່ອນທີ່ໄປຕາມສະຖານທີ່ຕ່າງໆ ຂອງອົງການກາແດງລາວໂດຍສະເພາະຕາມສະຖາບັນການຮຽນ-ການສຶກສາຕ່າງໆ ທີ່ມີໄວໜຸ່ມຢ່າງຫລວງຫຼາຍ ຈຶ່ງເປັນຍຸດທະສາດທີ່ສໍາຄັນ ແລະ ຖືກຕ້ອງເໝາະສົມທີ່ສຸດ ໃນການຊອກຫາປະລິມານເລືອດມາຮັບໃຊ້ຄົນເຈັບຕາມໂຮງໝໍແຫ່ງຕ່າງໆໃຫ້ໄດ້ຕາມຄວາມຕ້ອງການ.

ການໂຄສະນາປຸກລະດົມມວນຊົນ ໃຫ້ປະກອບສ່ວນ ບໍລິຈາກເລືອດເພື່ອການກຸສົນ ແລະ ຊ່ວຍເຫລືອຄົນເຈັບ ກໍ່ເປັນວຽກງານໜຶ່ງທີ່ສໍາຄັນ ແລະ ຈໍາເປັນທີ່ສຸດ ແນໃສ່ເພື່ອເຮັດໃຫ້ປະຊາຊົນທົ່ວໄປ ຕື່ນຕົວສະມັກໃຈບໍລິຈາກເລືອດ ຫລາຍຂຶ້ນກວ່າເກົ່າ. ໃນການສຶກສາຄັ້ງນີ້ພວກເຮົາພົບວ່າ ການໄດ້ຮັບຂໍ້ມູນກ່ຽວກັບການບໍລິຈາກເລືອດແບບສະມັກໃຈ (ບໍ່ວ່າຈະເປັນໃນຊ່ອງທາງໃດກໍ່ຕາມ ເຊັ່ນ ທາງໂທລະພາບ, ຫນັງສືພິມ, ເອກະສານ, ແຜ່ນພັບ, ໂປດສເຕີ ແລະ ວາລະສານຕ່າງໆ) ລ້ວນແຕ່ເປັນປັດໄຈທີ່ມີສ່ວນພົວພັນກັບການບໍລິຈາກເລືອດແບບສະມັກໃຈ ໂດຍບໍ່ຮຽກຮ້ອງສິ່ງຕອບແທນ ຢ່າງມີຄວາມສໍາຄັນທາງສະຖິຕິ. ເຖິງວ່າທີ່ຜ່ານມາ ທາງອົງການກາແດງລາວໄດ້ເຮັດການໂຄສະນາປຸກລະດົມ ໃຫ້ປະຊາຊົນທົ່ວໄປ ໄປບໍລິຈາກເລືອດແບບສະມັກໃຈໂດຍບໍ່ຮຽກຮ້ອງສິ່ງຕອບແທນ ໄດ້ເປັນຢ່າງດີແລ້ວກໍ່ຕາມ, ມັນຍັງມີຄວາມຈໍາເປັນ ທີ່ຈະຕ້ອງໄດ້ສືບຕໍ່ເຮັດກິດຈະກໍາດັ່ງກ່າວ ໃຫ້ດີ ແລະ ຫລາຍຂຶ້ນກວ່າເກົ່າ ໂດຍຈະຕ້ອງເອົາໃຈໃສ່ເຮັດໃຫ້ການໂຄສະນາປຸກລະດົມ ໃຫ້ສາມາດເຂົ້າເຖິງກຸ່ມເປົ້າໝາຍຫລັກທີ່ເປັນໄວໜຸ່ມ ໄດ້ຫລາຍທີ່ສຸດ ແລະ ຄວນມີແນວທາງໂຄສະນາທີ່ສາມາດດຶງດູດ ແລະ ປະທັບໃຈເຂົາເຈົ້າໃຫ້ດີຂຶ້ນກວ່າເກົ່າ. ສະນັ້ນ ການສຶກສາຄົ້ນຄວ້າກ່ຽວກັບວິທີການໂຄສະນາປຸກລະດົມການສະມັກໃຈບໍລິຈາກເລືອດ ທີ່ເໝາະສົມກັບກຸ່ມໄວໜຸ່ມ ອາດເປັນສິ່ງຈໍາເປັນ ແລະ ສໍາຄັນ ທີ່ຈະຕ້ອງໄດ້ເຮັດໃນອະນາຄົດ.

ການສຶກສາຄັ້ງນີ້ຍັງພົບວ່າການສະມັກໃຈໄປບໍລິຈາກເລືອດໃນວັນສໍາຄັນຕ່າງໆເຊັ່ນ ວັນເກີດ, ວັນຄົບຮອບ ແຕ່ງງານ ແລະ ວັນແຫ່ງຄວາມຮັກ ເປັນປັດໄຈໜຶ່ງທີ່ສໍາຄັນ ແລະ ໜ້າສົນໃຈ ເຊິ່ງເຮົາຄວນນໍາໄປພິຈາລະນາເພື່ອເປັນ ແນວທາງສໍາລັບໂຄສະນາປຸກລະດົມໃຫ້ໄວໜຸ່ມສະມັກໃຈບໍລິຈາກເລືອດ ໃນວັນສໍາຄັນດັ່ງກ່າວຫລາຍຂຶ້ນ ແນໃສ່ເພື່ອແກ້ໄຂ ສະພາບການຂາດເຂີນເລືອດໃຊ້ພາຍໃນໂຮງໝໍ ໃຫ້ບັນລຸໄດ້ຕາມເປົ້າໝາຍທີ່ວາງໄວ້.

## ຄໍາສະແດງຄວາມຂອບໃຈ

ການສຶກສາຄົ້ນຄ້ວາຄັ້ງນີ້ ໄດ້ຮັບທຶນສະໜັບສະໜູນຈາກພະແນກຮ່ວມມືລະຫວ່າງປະເທດຂອງຣາຊອານາຈັກໄທ. ຜູ້ສຶກສາຄົ້ນຄ້ວາ ຂໍສະແດງຄວາມຂອບໃຈນໍາ ທ່ານ ຜູ້ຊ່ວຍສາດສະດາຈານ ດຣ ພອນນະພາ ສຸກາຣາເວດສິລິ ອາຈານທີ່ປຶກສາບົດວິທະຍານິພົນ, ແພດຍິງ ສະສິທອນ ຕັ້ງສະຫວັດ, ຜູ້ຊ່ວຍສາດສະດາຈານ ດຣ ລຸຈິລາ ດວງສິງ, ຜູ້ຊ່ວຍສາດສະດາຈານ ນິຄົມທະນອມສຽງ, ດຣ ດວງຈັນ ກອງຜາລີ ແລະ Dr. Peter Bradshaw ເປັນຜູ້ຊ່ຽວຊານກວດສອບແບບສອບຖາມ ແລະ ທັງເປັນຄະນະກໍາມະການສອບວິທະຍານິພົນໃນຄັ້ງນີ້ ແລະ ໃຫ້ຂໍ້ສະເໜີແນະທີ່ເປັນປະໂຫຍດ. ຂໍສະແດງຄວາມຂອບໃຈນໍາຫົວໜ້າຫ້ອງວ່າການເມືອງຈັນທະບູລີ ທີ່ອໍານວຍຄວາມສະດວກໃຫ້ຜູ້ສຶກສາຄົ້ນຄ້ວາໄດ້ເກັບຂໍ້ມູນ ແລະ ຜູ້ປະສານງານຂອງທຸກບ້ານທີ່ໄດ້ໃຫ້ຄວາມຮ່ວມມືໃນການສຶກສາຄົ້ນຄ້ວາໃນຄັ້ງນີ້ດ້ວຍ.

## ເອກະສານອ້າງອີງ


Hsieh, Bloch & Larsen (1998). A Simple method of sample size calculation for linear logistic regression. *Statistics in Medicine 8*: 1623-1634.

International Federation of Red Cross and Red Crescent Societies. (2011). History. Cited on November 17th 2011, Available from: http://www.ifrc.org/en/who-we-are/history/

Lao Statistic Bureau Official Website (2011). Lao population. Cited on June 1, 2011, from: http://www.nsc.gov.la/

Lao Red Cross. (2011). History of the Lao Red Cross. Cited November 17th 2011. Available from: http://www.laoredcross.org.la/index. php/en/who-we-are/history.html.

National Blood Transfusion Centre (2010). Report of National Blood Transfusion Centre.

World Health Organization (2002). Workshop on National Coordinated Blood Transfusion Services. World Health Organization Regional Office of the Western Pacific Manila Philippines.

# Factors Associated with Voluntary Blood Donation among People in Chanthabouly District, Vientiane Capital, Lao PDR

Thongphanh Chanthalak [1*], Pornnapa Suggaravetsiri [2]

1. National Blood Transfusion Centre, Lao Red Cross, Vientiane, Laos
2. Faculty of Public Health, Khon Kaen University, Khon Kaen, Thailand

Received 20 May 2012; received in revised form 15 July 2012; accepted 15 October 2012

## Abstract

**Background and rationale**: In the Lao PDR, shortage of blood for transfusion for use in hospitals is an important and challenging problem, which has not been adequately resolved. This is due to the very low number of voluntary blood donation by the general population. Many factors may contribute to the low number of voluntary blood donation of Lao people, which we do not all know and understand.

**Methodology:** This was a retrospective, unmatched case-control study. Cases were people who voluntarily donated blood between January 1 to December 31, 2010 whose names were recorded in the record of the National Blood Transfusion Centre and controls were those who had never donated blood. Both groups of people were from Chanthabouly district, Vientiane Capital. PRECEDE Framework was used to design questionnaire which aimed to identify factors associated with voluntary blood donation.

**Results:** Eight hundred and ninety-eight subjects were enrolled in the study and interviewed (449 cases and 449 controls). The median (range) age of the respondents was 26 years (17 – 40). Factors significantly associated with voluntary blood donation were males (OR = 1.71; 95% CI = 1.31-1.23, $P$= 0.001), being single (OR = 2.01; 95% CI = 1.52-2.65, $P$<0.001), having a positive attitude toward voluntary blood donation (OR = 3.17; 95% CI = 2.37-4.22, $P$<0.001), convenience in traveling to and short distance from home to blood donation centre (OR = 2.35; 95% CI = 1.73-3.20, $P$=0.01), (OR = 1.67; 95% CI = 1.25-2.22, $P$=0.001), respectively, and having received information on blood donation from any channels (OR = 1.88; 95%CI = 1.38-2.55, $P$<0.001). Another important but not statistically significant reinforcing factor for voluntary blood donation was blood donation during important occasion (birthday, marriage anniversary and valentine's day).

**Conclusion:** This study suggested that (1) voluntary blood donation campaign should be carried out continuously and focus on young people at educational institutions and (2) it is very vital that mobile blood donation teams continue their activities regularly in order to ensure that blood demand in hospital can be achieved.

**Copyright:** © 2013 Chanthalak and Suggaravetsiri. This is an open-access article distributed under the terms of the Creative Commons Attribution Licence, which permits unrestricted use, distribution, and reproduction in any medium, provided the original author and source are credited.

---

**Keywords:** Blood, donation, voluntary, Vientiane, Laos.
*Corresponding author: Tel.: +856 20-22552828 ; fax: +856 21-218923 ; Email: tchanthalak@yahoo.com